ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 821/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 31 ສິງຫາ 2023

# ຂໍ້ຕົກລົງ
# ວ່າດ້ວຍ ການຂາຍຊັບສິນເຊົ່າຊື້

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ສະບັບເລກທີ 471/ລບ, ລົງວັນທີ 02 ກໍລະກົດ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍສັນຍາເຊົ່າສິນເຊື່ອ ສະບັບເລກທີ 265/ທຫລ, ລົງວັນທີ 20 ມີນາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 69/ກຄສບ, ລົງວັນທີ 22 ສິງຫາ 2023.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ວິທີການ ແລະ ມາດຕະການ ກ່ຽວກັບການຂາຍຊັບສິນເຊົ່າຊື້ ເພື່ອຮັບປະກັນການປະຕິບັດພັນທະສັນຍາ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງທຸກຝ່າຍ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 2 ການຂາຍຊັບສິນເຊົ່າຊື້

ການຂາຍຊັບສິນເຊົ່າຊື້ ແມ່ນການຂາຍຊັບສິນ ທີ່ຜູ້ເຊົ່າສິນເຊື່ອໄດ້ເຊົ່າຊື້ຈາກ ຜູ້ໃຫ້ເຊົ່າສິນເຊື່ອ ແຕ່ມີການລະເມີດສັນຍາ ຊຶ່ງຜູ້ໃຫ້ເຊົ່າສິນເຊື່ອ ໄດ້ທວງເອົາຊັບສິນເຊົ່າຊື້ນັ້ນຄືນຈາກຜູ້ເຊົ່າສິນເຊື່ອ, ທີ່ໄດ້ມີການຕົກລົງ ລະຫວ່າງຜູ້ເຊົ່າສິນເຊື່ອ ແລະ ຜູ້ໃຫ້ເຊົ່າສິນເຊື່ອ ໃຫ້ດຳເນີນການຂາຍຊັບສິນເຊົ່າຊື້ດັ່ງກ່າວ ເພື່ອນຳມາທົດແທນຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ຕາມການກຳນົດໃນສັນຍາເຊົ່າສິນເຊື່ອ.

### ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ເຊົ່າສິນເຊື່ອ, ຜູ້ໃຫ້ເຊົ່າສິນເຊື່ອ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

# ໝວດທີ 2
# ການຂາຍຊັບສິນເຊົ່າຊື້

**ມາດຕາ 4 ເງື່ອນໄຂການຂາຍຊັບສິນເຊົ່າຊື້**

ຊັບສິນເຊົ່າຊື້ທີ່ມີເງື່ອນໄຂດຳເນີນການຂາຍ ຕາມຂໍ້ຕົກລົງສະບັບນີ້ ຕ້ອງມີມູນຄ່າຕາມສັນຍາເຊົ່າຊື້ຢ່າງໜ້ອຍ ຫ້າສິບລ້ານ ກີບ ແລະ ຜູ້ເຊົ່າສິນເຊື່ອໄດ້ຊຳລະແລ້ວ ຢ່າງໜ້ອຍ ຫ້າສິບ ສ່ວນຮ້ອຍ (50%) ຂອງມູນຄ່າຊັບສິນດັ່ງກ່າວ ແລະ ຕ້ອງສອດຄ່ອງກັບເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ຜູ້ໃຫ້ເຊົ່າສິນເຊື່ອ ແລະ ຜູ້ເຊົ່າສິນເຊື່ອ ມີການຕົກລົງເຫັນດີເປັນເອກະພາບກັນ ເພື່ອຂາຍຊັບສິນເຊົ່າຊື້;
2. ຜູ້ເຊົ່າສິນເຊື່ອລະເມີດສັນຍາເຊົ່າຊື້ ຊຶ່ງຜູ້ໃຫ້ເຊົ່າສິນເຊື່ອໄດ້ແຈ້ງງວດຊຳລະທີ່ຄ້າງຈ່າຍ ແຕ່ຜູ້ເຊົ່າສິນເຊື່ອບໍ່ສາມາດສືບຕໍ່ຊຳລະຄ່າງວດໄດ້;
3. ຕາມຄຳສັ່ງ ຫຼື ຄຳຕັດສິນ ຂອງສານໃຫ້ຂາຍຊັບສິນເຊົ່າຊື້.

**ມາດຕາ 5 ການຂາຍຊັບສິນເຊົ່າຊື້**

ພາຍຫຼັງຜູ້ໃຫ້ເຊົ່າສິນເຊື່ອ ໄດ້ແຈ້ງໃຫ້ຜູ້ເຊົ່າສິນເຊື່ອ ໃຫ້ເຂົ້າມາຊຳລະຄ່າງວດຕາມທີ່ໄດ້ກຳນົດໄວ້ໃນວັກທີ 04 ມາດຕາ 13 ການປະຕິບັດສັນຍາ ຂອງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ສະບັບເລກທີ 471/ລບ, ລົງວັນທີ 02 ກໍລະກົດ 2021 ແລະ ໄດ້ທວງເອົາຊັບສິນເຊົ່າຊື້ຄືນມາແລ້ວ, ໃຫ້ຜູ້ເຊົ່າສິນເຊື່ອ ເປັນຜູ້ທີ່ໄດ້ຮັບບຸລິມະສິດທຳອິດໃນການດຳເນີນການຂາຍຊັບສິນເຊົ່າຊື້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້. ພາຍຫຼັງຜູ້ເຊົ່າສິນເຊື່ອ ບໍ່ສາມາດດຳເນີນການຂາຍຊັບສິນເຊົ່າຊື້ໄດ້ ຜູ້ໃຫ້ເຊົ່າສິນເຊື່ອ ຈຶ່ງດຳເນີນການຂາຍຊັບສິນດັ່ງກ່າວ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 6 ການຂາຍຊັບສິນເຊົ່າຊື້ ໂດຍຜູ້ເຊົ່າສິນເຊື່ອ**

ຜູ້ເຊົ່າສິນເຊື່ອ ຕ້ອງປະກາດຂາຍຊັບສິນເຊົ່າຊື້ ພາຍໃນໄລຍະເວລາ ສາມສິບ (30) ວັນ ຫຼື ຕາມການຕົກລົງເຫັນດີລະຫວ່າງ ຜູ້ໃຫ້ເຊົ່າສິນເຊື່ອ ແລະ ຜູ້ເຊົ່າສິນເຊື່ອ, ໂດຍການປະກາດຂາຍຜ່ານຊ່ອງທາງຕ່າງໆ ເປັນຕົ້ນ ໜັງສືພິມ, ວາລະສານ, ໂທລະພາບ, ວິທະຍຸ, ເວັບໄຊ ຫຼື ຊ່ອງທາງອື່ນ ທີ່ສາມາດຂາຍຊັບສິນເຊົ່າຊື້ ພາຍໃນເວລາທີ່ໄດ້ກຳນົດໄວ້.

**ມາດຕາ 7 ການຂາຍຊັບສິນເຊົ່າຊື້ ໂດຍຜູ້ໃຫ້ເຊົ່າສິນເຊື່ອ**

ພາຍຫຼັງຜູ້ເຊົ່າສິນເຊື່ອ ບໍ່ສາມາດຂາຍຊັບສິນເຊົ່າຊື້ໄດ້ຕາມກຳນົດເວລາ ຜູ້ໃຫ້ເຊົ່າສິນເຊື່ອ ຕ້ອງປະກາດຂາຍຊັບສິນເຊົ່ານັ້ນ ພາຍໃນໄລຍະເວລາ ສາມສິບ (30) ວັນ ແລະ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນໃຫ້ຜູ້ເຊົ່າສິນເຊື່ອ ເຂົ້າຮ່ວມການຂາຍຊັບສິນເຊົ່າຊື້ ຢ່າງໜ້ອຍ ຫ້າ (5) ວັນ ກ່ອນວັນຂາຍຊັບສິນເຊົ່າຊື້, ກໍລະນີ ຜູ້ເຊົ່າສິນເຊື່ອ ບໍ່ສາມາດເຂົ້າຮ່ວມ ຫຼື ບໍ່ເຂົ້າຮ່ວມ ການຂາຍຊັບສິນເຊົ່າຊື້ ຜູ້ໃຫ້ເຊົ່າສິນເຊື່ອມີສິດຂາຍຊັບສິນເຊົ່າຊື້ດັ່ງກ່າວໄດ້ ຕາມຂະບວນການ, ໂດຍການປະກາດຂາຍຜ່ານຊ່ອງທາງຕ່າງໆ ເປັນຕົ້ນ ໜັງສືພິມ, ວາລະສານ, ໂທລະພາບ, ວິທະຍຸ, ເວັບໄຊ ຫຼື ຊ່ອງທາງອື່ນ ທີ່ສາມາດຂາຍຊັບສິນເຊົ່າຊື້ ພາຍໃນເວລາທີ່ໄດ້ກຳນົດໄວ້.